# ບົດທີ 4

# ການຄືນພະຊົນ ການສະເດັດສູ່ສະຫວັນ ການປະທັບເທິງພະທີ່ນັ່ງ

ພະອົງຄືນແລ້ວ



ກ ____________________



ຂ ____________________



ຄ ____________________

*ໃນບົດຮຽນນີ້ ເຮົາຈະສຶກສາເລື່ອງຄວາມສຳພັນລະຫວ່າງການຄືນພະຊົນ ການສະເດັດສູ່ສະຫວັນ ແລະ ການປະທັບເທິງພະທີ່ນັ່ງຂອງພະອົງ. ພວກຄຣິດສະຕຽນເຮົາໄດ້ຮັບຄຸນປະໂຫຍດທັງ 3 ປະການເຫຼົ່ານັ້ນ. ຈະຮຽນເລື່ອງຄຸນປະໂຫຍດຈາກການຄືນພະຊົນກ່ອນ.*

## ການຄືນພະຊົນ

**1** ຕັ້ງແຕ່ເຮົາເລີ່ມຕົ້ນຮຽນຫຼັກສູດນັດທາຍເຫຼັ້ມນີ້ ເຫັນຫຼາຍເທື່ອວ່າ ພະອົງຮຽກຮ້ອງເອົາສິດທິເປັນພະເຈົ້າແທ້. ພະອົງປະ ກາດວ່າຕົນເອງເປັນພະເຈົ້າ. ພະອົງສັ່ງສອນວ່າຕົນເອງເປັນພະເຈົ້າ ແລະກິດຈະການຂອງພະອົງ ກໍສະແດງວ່າເປັນພະເຈົ້າ. ຫຼັກຖານສຳຄັນທີ່ສຸດທີ່ພະອົງເປັນພະບຸດອົງດຽວຂອງພະເຈົ້າຄືຫຍັງ? (ອ່ານ ໂລມ 1:4 ກ່ອນຈະຕອບ) ____________

**2** ກ່ອນຈະຮຽນຕໍ່ໄປໃຫ້ຮຽນຄືນເລື່ອງໃນບົດກ່ອນ.

ກ. ມີຫຼັກຖານ 3 ປະການໃດທີ່ພະອົງຄືນພະຊົນ?

________________________________________________________________

________________________________________________________________

________________________________________________________________

ຂ. ມີເຫດການໃດທີ່ພິສູດວ່າພະເຢຊູເປັນພະບຸດອົງດຽວຂອງພະເຈົ້າ? _______________

**3** ເນື່ອງຈາກການຄືນພະຊົນ ເຮົາຮູ້ຢູ່ແລ້ວວ່າພະເຢຊູເປັນພະບຸດອົງດຽວຂອງພະເຈົ້າແທ້. ຊ້ຳບໍ່ໜຳເຮົາຮູ້ວ່າພະເຈົ້າຈະ ຍົກຜິດບາບຂອງເຮົາໃຫ້ຫາຍໂດຍການບູຊາຊີວິດຂອງພະອົງແທນເຮົາ.

ກ. 1 ໂກລິນໂທ 15:17 ບອກວ່າຖ້າພະເຢຊູບໍ່ໄດ້ຄືນພະຊົນ ເຮົາຍັງຈະຢູ່ໃນຫຍັງ? _______

ຂ. ຄືວ່າ ທີ່ພະອົງຄືນພະຊົນແລ້ວ ສະແດງວ່າພະເຈົ້າຈະຍົກບາບຂອງເຮົາໂດຍການບູຊາຊີວິດຂອງໃຜ? ________________________________________________________

**4** ໃຫ້ອ່ານ ກຈກ 2:32

ກ. ແມ່ນໃຜທີ່ຊົງບັນດານໃຫ້ພະເຢຊູຄືນມາ? ________________________________

ຂ. ສະແດງວ່າ ພະເຈົ້າໄດ້ຮັບຄວາມຕາຍຂອງພະອົງແທນບາບຂອງໃຜ? _____________

**5** ກ. ທີ່ພະບິດາຍົກພະເຢຊູໃຫ້ຄືນມາຈາກຕາຍ ສະແດງວ່າພະເຢຊູເປັນພະບຸດຂອງໃຜ?_____

ຂ. ແລະເລື່ອງທີ່ພະເຢຊູສະຫຼະຊີວິດເປັນເຄື່ອງບູຊາແທນຜິດບາບຂອງເຮົາ ສະແດງວ່າຢ່າງໃດ? (ເລືອກ)

______ ພະເຈົ້າໄດ້ຮັບການບູຊາ

______ ພະເຈົ້າບໍ່ໄດ້ຮັບ

______ ພະເຈົ້າບໍ່ສັງເກດເລື່ອງ

**6** ກ. ເຮົາຮູ້ວ່າພະເຢຊູເປັນພະບຸດອົງດຽວຂອງພະເຈົ້າ ເພາະພະອົງ _____ ມາຈາກຕາຍ. (ຕື່ມ)

ຂ. ເຮົາຮູ້ວ່າພະບິດາໄດ້ຮັບການເສຍສະຫຼະຊີວິດຂອງພະເຢຊູແທນຜິດບາບຂອງເຮົາເພາະພະເຈົ້າ __________________ ມາຈາກຕາຍ. (ຕື່ມຄວາມຂາດ)

*ການຄືນພະຊົນຂອງພະເຢຊູເປັນຮາກຖານສຳຄັນໃນຫຼັກຄວາມເຊື່ອຄຼິດສະຕຽນ. ຍ້ອນການຄືນພະຊົນນັ້ນ ເຮົາເຫັນຮູ້ວ່າພະເຢຊູເປັນພະບຸດຂອງພະເຈົ້າທັງຮູ້ວ່າພະບິດາເຈົ້າໄດ້ຮັບຄວາມຕາຍຂອງພະອົງມາເປັນເຄື່ອງບູຊາ ແທນຜິດບາບຂອງເຮົາ.*

**7** ມີບາງຄົນທີ່ສົງໄສຢາກຮູ້ວ່າ ພະອົງຄືນມາໂດຍຮ່າງກາຍຢ່າງໃດ. ຕາມຫຼັກໃນພະຄຳພີບອກວ່າພະອົງຄືນມາໂດຍ ພະ ກາຍອັນດຽວກັນ ແຕ່ພະກາຍນັ້ນປ່ຽນລັກສະນະໃໝ່.

ກ. ພະອົງຄືນມາໂດຍພະກາຍອັນດຽວ ແຕ່ພະອົງຈະບໍ່ຕາຍອີກຈັກເທື່ອ ເພາະເປັນພະກາຍທີ່ປ່ຽນ __________________ . (ຕື່ມຄວາມທີ່ຂາດ)

ຂ. ທີ່ພະເຢຊູຍົກລາຊະໂລຄືນມາກໍເປັນກໍລະນີແຕກຕ່າງກັນໄປ ເພາະຕໍ່ໄປລາຊະໂລກໍຕາຍອີກລູກ ສາວເຈົ້ານາຍ ທີ່ ພະອົງຍົກຄືນມາກໍຕາຍໄປອີກ. ພະເຢຊູຍົກເຂົາຄືນມາແຕ່ຍັງເປັນກາຍອັນດຽວກັນເຂົາຈິ່ງຕາຍອີກເພາະກາຍ ຂອງເຂົາບໍ່ປ່ຽນ ___________ . (ຕື່ມ)

**8** ການຄືນຈາກຕາຍຂອງພະເຢຊູ ແຕກຕ່າງກັນກັບການຄືນຈາກຕາຍຂອງລາຊະໂລ ແລະລູກສາວຂອງເຈົ້ານາຍ ແມ່ນ ໃຜຕໍ່ໄປນີ້ທີ່ຖືກຄືນມາ ຕໍ່ໄປກໍຕາຍອີກເພາະຄືນມາໂດຍບໍ່ປ່ຽນລັກສະນະຮ່າງກາຍໃໝ່?. (ເລືອກ)

ກ. ______ ລາຊະໂລ

ຂ. ______ ລູກສາວຂອງເຈົ້ານາຍ

ຄ. ______ ພະເຢຊູ



**9** ໃຫ້ທ່ານສັງເກດດັ່ງຕໍ່ໄປນີ້:

* ພະເຢຊູຄືນມາໂດຍຍັງມີຮ່າງກາຍອັນດຽວກັບ ຮ່າງກາຍທີ່ຕາຍກ່ອນ.

* ຮ່າງກາຍອັນປ່ຽນລັກສະນະໃນເມື່ອເວລາຄືນພະຊົນຈິ່ງຈະບໍ່ຕາຍອີກ.

ກ. ໃນ ໂຢຮັນ 20:27 ເຫັນຫຼັກຖານໃດວ່າ ພະອົງຄືນມາ ໂດຍຮ່າງກາຍອັນດຽວກັນກັບຮ່າງກາຍທີ່ຖືກຂ້າ? ____________________________________________

ຂ. ໃນ ລູກາ 24:41-43 ມີຫຼັກຖານໃດທີ່ພະອົງປາກົດມາເປັນຮ່າງກາຍແທ້ ບໍ່ແມ່ນແຕ່ວິນຍານ? ____________________________________________

**10** ແຕ່ເຫັນວ່າ ພະກາຍຂອງພະອົງໄດ້ປ່ຽນລັກສະນະຈິ່ງບໍ່ມີການຈຳກັດຢ່າງແຕ່ກ່ອນ. (ຕື່ມຄວາມຂາດ)

ກ. ໃນ ໂຢຮັນ 20:19 ເຫັນວ່າພະອົງເຂົ້າຫ້ອງທີ່ເຂົາ __________________ ປະຕູກ່ອນ.

ຂ. ໃນ ລູກາ 24:31 ພະອົງ ______________________ ຈາກສອງຄົນໃນບ້ານເອມາອຸດ.

**11** ເຖິງວ່າພະອົງຍັງມີພະກາຍອັນດຽວກັນກັບແຕ່ກ່ອນກໍຕາມ ແຕ່ກາຍນັ້ນປ່ຽນ ___________ ຈິ່ງຈະຜ່ານປະຕູ ແລະຫາຍໄປໄດ້. (ຕື່ມຄວາມທີ່ຂາດ)

**12** ກ. ໃຫ້ທ່ານຈົດຫຼັກຖານຢ່າງນ້ອຍປະການໜຶ່ງ ທີ່ສະແດງວ່າພະເຢຊູຄືນມາໂດຍພະກາຍອັນດຽວກັນກັບທີ່ເຂົາຂ້າ. ____________________

ຂ. ໃຫ້ທ່ານຈົດຫຼັກຖານປະການໜຶ່ງທີ່ສະແດງວ່າ ພະກາຍຂອງພະອົງປ່ຽນລັກສະນະໃໝ່

____________________

**13** ກ. ໃນ 2 ໂກລິນໂທ 4:14 ແມ່ນໃຜທີ່ບັນດານໃຫ້ພະເຢຊູຄືນພະຊົນ? ____________

ຂ. ພະອົງຈະໃຫ້ໃຜຄືນຂຶ້ນມາກັບພະເຢຊູເໝືອນກັນ? ____________________

**14** ໃຫ້ເປີດອ່ານ 1 ໂກລິນໂທ 6:14

ກ. ທີ່ພະເຈົ້າໄດ້ຊົງບັນດານໃຫ້ອົງພະຜູ້ເປັນເຈົ້າຄືນຂຶ້ນມາ ອ້າງເຖິງການຄືນຂຶ້ນມາຂອງໃຜ?

____________________

ຂ. ພະເຈົ້າຈະຊົງບັນດານໃຫ້ຜູ້ໃດຄືນມາໃໝ່ດ້ວຍ? ____________________

**15** ໃນຟີລິບປອຍ 3:21 ເຫັນວ່າໃນເມື່ອສຸດທ້າຍ ພະອົງຈະໃຫ້ເຮົາຄືນຂຶ້ນໂດຍມີຮ່າງກາຍຢ່າງໃດ? (ເລືອກ)

ກ. ______ ຢ່າງດຽວກັນກັບລາຊະໂລໃນເມື່ອຄືນມາໃນບ້ານເບດທາເນຍ.

ຂ. ______ ຢ່າງດຽວກັນກັບລູກສາວຂອງເຈົ້ານາຍ.

ຄ. ______ ຢ່າງດຽວກັນກັບພະເຢຊູໃນເມື່ອຄືນຈາກຕາຍ.



**16** ໃນເມື່ອພະເຈົ້າຍົກຄົນທີ່ໄວ້ວາງໃຈໃນພະເຢຊູໃຫ້ຄືນມາ ເຮົາຍັງຈະມີ ____________________ ອັນເກົ່າ ແຕ່ວ່າຈະປ່ຽນ ____________ ໃໝ່. (ຕື່ມຄວາມຂາດ)

**17** ໃນ1 ໂກລິນໂທ 15:20-23 ອາຈານໂປໂລຍົກຕົວຢ່າງຈາກການປູກຝັງ. ເທື່ອໃດທີ່ເຮົາຈະປູກເມັດເຂົ້າ ເມັດທີ່ເຮົາປູກ ນັ້ນຄື ຕາຍໃນຂີ້ດິນ ແຕ່ຕໍ່ມາກໍແຕກງອກແລ້ວກາຍເປັນລຳຕົ້ນກັບຮວງເຂົ້າໃໝ່. ຮວງເຂົ້າທີ່ສຸກກ່ອນໝູ່ກໍເປັນຜົນທຳ ອິດຈາກເມັດເຂົ້າທີ່ເຮົາປູກ.

ກ. ໃນ 1 ກລທ 15:20 ແມ່ນໃຜເປັນຜົນທຳອິດໃນການຄືນມາຈາກຕາຍ? ____________

ຂ. ໃຫ້ອ່ານ ຂໍ້ 20 ແລະ 23 ອີກ. ຖ້າພະເຢຊູເປັນຜົນທຳອິດ ຕໍ່ມາແມ່ນໃຜ? __________

____________________

**18** ໃນ1 ກລທ 15:20.

ກ. ການຄືນພະຊົນຂອງພະເຢຊູຄືການເກັບກ່ຽວຜົນໃດ? ____________________

ຂ. ຜູ້ທີ່ໄວ້ວາງໃຈໃນພະເຢຊູຈະຄືນຈາກຕາຍໃນເວລາທີ່ໃຜຈະມາ? ______________

**19** ທີ່ພະເຢຊູຄືນມາຈາກຕາຍ ກໍເປັນຫຼັກຖານວ່າ ຄົນທີ່ຢູ່ຝ່າຍພະເຢຊູ ຈະຖືກຫຍັງໃນເມື່ອພະອົງສະເດັດມາອີກ? ____________________

**20** ກ. ມີຫຼັກຖານສຳຄັນປະການໃດທີ່ພິສູດວ່າພະເຢຊູເປັນພະບຸດຂອງພະເຈົ້າແທ້?

______________________________________________________

ຂ. ມີຫຼັກຖານສຳຄັນປະການໃດທີ່ພິສູດວ່າ ພະບິດາເຈົ້າຮັບການບູຊາຊີວິດຂອງພະອົງແທນຜິດບາບມະນຸດເຮົາ?______________________________

ຄ. ທີ່ພະເຢຊູຄືນພະຊົນໂດຍຮ່າງກາຍອັນເກົ່າທີ່ຮັບການປ່ຽນເປັນລັກສະນະໃໝ່ ສະແດງວ່າຄົນເຮົາທີ່ໄວ້ວາງໃຈໃນ ພະເຢຊູຈະຄືນຈາກຕາຍໂດຍມີຮ່າງກາຍຢ່າງໃດ? __________

______________________________________________________

## ການສະເດັດສູ່ສະຫວັນ

**21** ການຄືນພະຊົນເປັນບາດກ້າວທຳອິດ ກ່ອນພະອົງຈະປະທັບເທິງພະທີ່ນັ່ງ ແຕ່ຍັງມີອີກບາດກ້າວໜຶ່ງ. ໃຫ້ທ່ານເບິ່ງຫົວ ເລື່ອງກ່ອນ ບາດກ້າວຫຼັງຈາກທີ່ພະອົງຄືນຈາກຕາຍ ກ່ອນຈະປະທັບເທິງພະທີ່ນັ່ງຄືຫຍັງ? ______________________________

**22** ການຄືນພະຊົນ ແລະການສະເດັດສູ່ສະຫວັນໝາຍເຖິງການສິ້ນສຸດທີ່ພະອົງຮັບຊາດເປັນມະນຸດ ແລະການເລີ້ມຕົ້ນ ທີ່ ພະອົງຢູ່ໃນສະຫວັນກັບພະບິດາ. ໃຫ້ທ່ານຈົດເຫດການສອງປະການທີ່ໝາຍເຖິງການສິ້ນສຸດຂອງການປ່າວປະກາດຂອງພະອົງໃນໂລກນີ້.

ກ. ______________________________________________________

ຂ. ______________________________________________________

**23** ໃຫ້ອ່ານ ກຈກ 1:9-11

ກ. ພະອົງໄປໃສ? ______________________________________

ຂ. ພວກລູກສິດຂອງພະອົງເຫັນຫຍັງໃນເມື່ອພະອົງສະເດັດຂຶ້ນ? (ເລືອກ)

______ ເມກ ______ ເທວະດາ

______ ສອງຄົນນຸ່ງເຄື່ອງຂາວ ______ ລົດຫຼຽມມ້າຈຳນວນຫຼາຍ

ຄ. ເມື່ອໃດພວກເຮົາຈະເຫັນພະອົງອີກ? ______________________________

**24** ພວກລູກສິດນັ້ນ ບໍ່ພ້ອມຈະໃຫ້ພະອົງຈາກເຂົາໄປເທື່ອ. ແຕ່ທີ່ຈິງພວກລູກສິດນັ້ນຈະຮັບພະພອນຢ່າງຫຼາຍແທ້ ໃຫ້ ອ່ານ ໂຢຮັນ 7:39

ກ. ໃນເວລານັ້ນ ພະວິນຍານມາແລ້ວຫຼືຍັງ? ____________________________

ຂ. ແມ່ນເພາະເຫດໃດທີ່ບໍ່ໄດ້ມາເທື່ອ? ______________________________

(ໝາຍຄວາມວ່າບໍ່ໄດ້ຂຶ້ນສະຫວັນເທື່ອ)

**25** ໃຫ້ອ່ານ ໂຢຮັນ 16:7

ກ. ຖ້າພະເຢຊູບໍ່ໄດ້ຈາກເຂົາໄປ ພະຜູ້ຊ່ວຍຈະບໍ່ມາ ຄຳວ່າ “ພະຜູ້ຊ່ວຍ” ນັ້ນອ້າງເຖິງອົງໃດ? (ເລືອກ)

______ ພະບິດາ ______ ພະບຸດ ______ ພະວິນຍານ

ຂ. ໃນ ໂຢຮັນ 16:5 ພະເຢຊູຈະໄປຫາໃຜ? ________________________________

ຄ. ພະເຢຊູຈະໄປຫາພະບິດາພ້ອມກັບເຫດການໃດ? ________________________

ງ. ໂຢຮັນ 16:7 ສອນວ່າ ພະເຢຊູຈຳເປັນຕ້ອງສະເດັດສູ່ສະຫວັນກ່ອນໃຜຈະມາ? ______

**26** ກ. ໃນ ກຈກ 1:9 ເຫັນວ່າ ພະເຈົ້າຮັບພະເຢຊູຂຶ້ນເມືອໃນຂະນະໃດ? ______________

ຂ. ໃນ ກຈກ 1:8 ເຫັນວ່າພວກລູກສິດຂອງພະອົງຈະຮັບລິດເດດຈາກໃຜ? __________

**27** ໃຫ້ອ່ານ ກຈກ 2:33 ໃນຄຳເທດສະໜານັ້ນ ເປໂຕອະທິບາຍວ່າ ພະເຈົ້າໄດ້ສັນຍາທີ່ໃຫ້ພະວິນຍານບໍລິສຸດລົງມາຫຼັງ ຈາກພະເຢຊູຂຶ້ນສູ່ສະຫວັນແລ້ວ.

ກ. ເປໂຕເທດສະໜາເລື່ອງນີ້ວັນໃດ? (ກຈກ 2:1) __________________________

ຂ. ພວກລູກສິດຂອງພະອົງກໍເຕັມໄປດ້ວຍໃຜ? (ກຈກ 2:4) ____________________

ຄ. ພະເຢຊູຖອກຫຍັງລົງມາ? (ກຈກ 2:33) ________________________________

**28** ເຫັນວ່າ ພວກລູກສິດຂອງພະອົງໄດ້ຜົນຮັບສຳຄັນຢ່າງໃດ ເນື່ອງຈາກການສະເດັດສູ່ສະຫວັນຂອງພະເຢຊູ? ____________________________________________________

**29** ໃນເມື່ອພະອົງຍັງມີຊີວິດຢູ່ກັບມະນຸດເຮົາໃນໂລກນີ້ ພະອົງຢູ່ໃນຮ່າງກາຍທີ່ຈຳກັດ ຫຼັງຈາກທີ່ພະອົງສະເດັດສູ່ສະຫວັນ ແລ້ວບໍ່ຈຳກັດ. ຖ້າພະເຢຊູຍັງຢູ່ໃນໂລກ ພະອົງຢູ່ໄດ້ແຕ່ບ່ອນດຽວ. ເມື່ອພະເຢຊູຂຶ້ນແລ້ວພະວິນຍານລົງມາ ພະ ວິນຍານນັ້ນຢູ່ໃນຄຼິດສະຕຽນທຸກໆ ຄົນ. ໝາຍຄວາມວ່າ ພະເຢຊູທີ່ຂຶ້ນໄປແລ້ວມີອຳນາດຫຼາຍກວ່າ, ເພາະຢູ່ໃນຄຼິດ ສະ ຕຽນທຸກໆ ຄົນກໍໄດ້.

ກ. ກ່ອນພະເຢຊູບໍ່ໄດ້ຂຶ້ນເທື່ອ ພະເຢຊູຈະສາມາດຢູ່ກັບລາຊະໂລໃນແຂວງຢູດາ ໃນເວລາດຽວກັນຈະຢູ່ກັບເປໂຕໃນ ແຂວງຄາລີເລໄດ້ບໍ່? ______________________

ຂ. ຫຼັງຈາກພະເຢຊູຂຶ້ນແລ້ວ ພະເຢຊູຈະສາມາດຢູ່ກັບພີ່ນ້ອງຄຼິດສະຕຽນໃນສະຫວັນນະເຂດໃນເວລາດຽວກັນທີ່ຢູ່ກັບ ພີ່ນ້ອງຄຼິດສະຕຽນໃນໄຊຍະບູລີໄດ້ບໍ່? ______________

*ຄືວ່າພະວິນຍານຂອງພະເຈົ້າຢູ່ກັບຄຼິດສະຕຽນທຸກບ່ອນທຸກທີ່ກໍໄດ້ ເຖິງອາດຈະເປັນລ້ານໆຄົນທີ່ຢູ່ຫຼາຍປະເທດກໍຕາມ*

**30** ໃຫ້ອ່ານ ໂຢຮັນ 14:2 ເຫັນຜົນຮັບທີ່ດີຈັກປະການທີ່ມີມາຈາກການສະເດັດສູ່ສະຫວັນຂອງພະອົງ. ພະອົງໄປຈັດແຈງ ຫຍັງໄວ້? ____________________________________

**31** ເຮົາຮຽນມາແລ້ວ ເລື່ອງຜົນຮັບສຳຄັນສອງປະການທີ່ເກີດມີມາຈາກ ການສະເດັດສູ່ສະຫວັນຂອງພະອົງ. ໃຫ້ທ່ານຈົດ ທັງສອງໄວ້. (ຕື່ມຄວາມຂາດ)

ກ. __________________________ ລົງມາ.

ຂ. ພະເຢຊູໄດ້ຈັດແຈງ ________________.



**32** ເຫັນຜົນຮັບທີ 3 ໃນ 1 ໂຢຮັນ 2:1

ກ. ຖ້າເຮົາເຮັດຜິດ ມີຄົນຢ່າງໃດໃນສະຫວັນທີ່ຈະເວົ້າຊ່ອຍພວກເຮົາ? _______________

ຂ. ທະນາຍຄວາມໃນສະຫວັນນັ້ນຄືໃຜ? ____________________________________

**33** ໃຫ້ອ່ານ ໂລມ 8:34 ພະເຢຊູຢູ່ກ້ຳຂວາຂອງພະເຈົ້າ ເຮັດຫຍັງເພື່ອເຮົາ? _____________

**34** ໂລມ 8:34 ຄ້າຍຄືກັບ 1 ໂຢຮັນ 2:1 ທີ່ພະເຢຊູເປັນທະນາຍຄວາມຝ່າຍເຮົາ ໝາຍຄວາມວ່າ ພະອົງເຮັດຫຍັງເພື່ອ ເຮົາ? _____________________________________________

**35** ທະນາຍຄວາມເປັນຄົນທີ່ອ້ອນວອນເພື່ອຜູ້ອື່ນ.

ກ. ພະເຢຊູອ້ອນວອນເພື່ອໃຜ? ___________________________________________

ຂ. ຕໍ່ໜ້າໃຜ? ___________________________________________________

**36** ການເປັນທະນາຍຄວາມຂອງເຮົາ ແລະການອ້ອນວອນເພື່ອເຮົາຄືຫຍັງ? (ເລືອກ)

ກ. ______ ພະເຢຊູໂຕ້ຖຽງກັບພະບິດາເລື່ອງເຮົາ

ຂ. ______ ພະເຢຊູໃຫ້ສິນບົນເພື່ອເຮົາ ຄ. ______ ພະເຢຊູເວົ້າຊ່ອຍເຮົາ

**37** ໃຫ້ອ່ານ ເຮັບເລີ 7:25

ກ. ພະເຢຊູຊ່ອຍທູນຂໍພະກະລຸນາໃຫ້ຄົນທີ່ເຂົ້າມາຫາໃຜ? _______________________

ຂ. ໂດຍທາງໃຜ? _______________________________________________

**38** ກ. ພະເຢຊູຕາຍແທນບາບເຮົາຈັກເທື່ອ? ____________________________________

ຂ. ການພະຊົນຂອງພະອົງຈະມີເວລາສິ້ນສຸດບໍ່? _______________________________

**39** ຕາມໃນ ໂກໂລຊາຍ 1:19-20 ແມ່ນໃຜຊົງເປັນສິ່ງສາລະພັດກັບຄືນດີກັບພະເຈົ້າ? _______

— *ບໍ່ແມ່ນວ່າ ພະເຈົ້າບໍ່ຢາກໃຫ້ເຮົາຮັບພະພອນ.*

— *ບໍ່ແມ່ນວ່າ ພະເຈົ້າບໍ່ເຕັມໃຈຈະຊ່ອຍເຮົາ ພະເຢຊູຈຶ່ງຕ້ອງຊັກຊວນກ່ອນ.*

— *ບໍ່ແມ່ນວ່າຈະຕ້ອງຍົກເລື່ອງບູຊາຢູ່ສະເໝີ.*

— *ບໍ່ແມ່ນວ່າ ພະເຢຊູຕ້ອງທົນທຸກທໍລະມານຢູ່ຕໍ່ໄປບໍ່ຂາດ.*

* *ແມ່ນແຕ່ພະເຢຊູທູນຂໍຢ່າງຖືກກັບນ້ຳພະໄທຂອງພະບິດາ.*

* *ພະບິດາຢາກໃຫ້ເຮົາຮັບພະພອນ*

* *ການບູຊາຂອງພະເຢຊູສຳເລັດໃນເທື່ອດຽວນັ້ນ*

* *ທີ່ພະເຢຊູເວົ້າຊ່ອຍເຮົາ ເປັນການປ້ອງກັນຕົວຈາກພະຍາມານ*

**40** ກ. ໃນທຳນອງວ່າເປັນທະນາຍຄວາມຂອງເຮົາໃນສະຫວັນ ພະເຢຊູເຮັດຫຍັງຊ່ອຍພວກເຮົາ ຕໍ່ໜ້າພະບິດາ? ___________________________________________________

ຂ. ຜົນຮັບສຳຄັນທີ 3 ທີ່ມີມາຈາກການສະເດັດສູ່ສະຫວັນຂອງພະເຢຊູຄືຫຍັງ?_________

_____________________________________________________________

**41** ຜົນຮັບສຳຄັນທີ່ມີມາຈາກການສະເດັດສູ່ສະຫວັນຂອງພະເຢຊູ ມີສາມປະການໃດ? (ເລືອກ)

ກ. ______ ພະອົງປະເຮົາໄວ້ຢ່າງລູກກຳພ້າ

ຂ. ______ ໃຫ້ເຮົາຫຼົບໜີຈາກຄວາມລຳບາກໃນໂລກນີ້.

ຄ. ______ ພະເຈົ້າໃຊ້ພະວິນຍານບໍລິສຸດມາ.

ງ. ______ ພະອົງໄປຈັດແຈງບ່ອນໄວ້ເພື່ອເຮົາໃນສະຫວັນ.

ຈ. ______ ພະອົງເລີກບໍ່ອ້ອນວອນເພື່ອເຮົາຕໍ່ໄປ.

ສ. ______ ເປັນທະນາຍຄວາມທີ່ອ້ອນວອນເພື່ອເຮົາຕໍ່ພະບິດາ

**42** ໃຫ້ທ່ານຈົດຜົນຮັບສຳຄັນ 3 ປະການທີ່ມີມາຈາກການສະເດັດສູ່ສະຫວັນຂອງພະເຢຊູ.

ກ. ____________________________________________

ຂ. ____________________________________________

ຄ. ____________________________________________

*ຕັ້ງແຕ່ພະເຢຊູສະເດັດຂຶ້ນສະຫວັນແລ້ວ ພະອົງຢູ່ກ້ຳຂວາຂອງພະບິດາ. ໝາຍຄວາມວ່າ ໃນວິນາທີປະຈຸບັນນີ້ ພະເຢຊູກຳລັງອ້ອນວອນເພື່ອທ່ານ! ເປັນຄຸນປະໂຫຍດແທ້!*

## ພະອົງປະທັບເທິງພະທີ່ນັ່ງ

**43** ໃນ _ ກຈກ ບົດທີ 2 ທ່ານເປໂຕກ່າວວ່າ ພະບິດາຈະຍົກພະເຢຊູຂຶ້ນໃຫ້ຢູ່ກ້ຳຂວາຂອງພະບິດາ ໃນ ສະຫວັນ.

ກ. ໃນ ກຈກ 2:30 ທີ່ເຫັນພະເຈົ້າສັນຍາວ່າ ຈະປະທານຜູ້ໜຶ່ງໃນວົງຕະກຸນຂອງດາວິດໃຫ້ປະທັບເທິງຫຍັງ? ______________________________

ຂ. ທຳມະດາ ແມ່ນຕຳແໜ່ງໃດທີ່ປະທັບເທິງພະທີ່ນັ່ງ? ______________________

ຄ. ດຽວນີ້ ພະເຢຊູປະທັບຢູ່ໃສ? ______________________________

ງ. ປົກຄອງໂລກໂດຍມີຕຳແໜ່ງໃດ? ______________________________

**44** ໃຫ້ອ່ານ ເອເຟໂຊ 1:20-22 ແມ່ນໂດຍອຳນາດຂອງພະເຈົ້າທີ່ຍົກພະເຢຊູຄືນຈາກຕາຍ.

ກ. ພະເຢຊູສະເດັດສູ່ໃສ? ______________________________

ຂ. ປະທັບບ່ອນໃດ? ______________________________

**45** ກ. ໃນ ເອເຟໂຊ 1:21 ເຫັນວ່າພະເຢຊູຢູ່ __________ ບັນດາຜູ້ປົກຄອງ, ຜູ້ມີລິດເດດ ແລະຜູ້ມີ ອຳນາດ. (ຕື່ມຄວາມທີ່ຂາດ)

ຂ. ແລະຢູ່ ___________ ນາມຊື່ທັງປວງທີ່ເຂົາເອີ້ນຂຶ້ນ ບໍ່ໃຊ້ໃນສະໄໝນີ້ເທົ່ານັ້ນ ແຕ່ວ່າໃນສະ ໄໝທີ່ຈະມາ ເຖິງດ້ວຍ. (ຕື່ມຄວາມທີ່ຂາດ)

**46** ໃນຂໍ້ນັ້ນ ອາຈານໂປໂລກ່າວວ່າ ພະເຢຊູຢູ່ເໜືອກວ່າ ອຳນາດທຸກຢ່າງໃນທຸກສະໄໝ.

ກ. ພະເຢຊູນັ່ງໃສປົກຄອງ? ______________________________

ຂ. ຢູ່ກ້ຳຂວາຂອງໃຜ? ______________________________

**47** ໃຫ້ອ່ານ ເອເຟໂຊ 1:22 ອີກ.

ກ. ແມ່ນສິ່ງໃດຢູ່ໃຕ້ພະບາດຂອງພະຄຼິດ? ______________________________

ຂ. ໝາຍຄວາມວ່າ ແມ່ນຜູ້ໃດເປັນກະສັດເໜືອທຸກສິ່ງ? ______________________________

**48** ໃນ __ມທ 28:18 ເຫັນວ່າ ອຳນາດທັງໝົດໃນສະຫວັນ ແລະທີ່ແຜ່ນດິນໂລກ ຊົງມອບໃຫ້ແກ່ໃຜ? ______________________________

**49** ມີຜົນຮັບສຳຄັນ 3 ປະການໃດທີ່ມີມາຈາກການສະເດັດສູ່ສະຫວັນຂອງພະເຢຊູ?

ກ. ______________________________

ຂ. ______________________________

ຄ. ______________________________

*ໃນປະຊຸມເທື່ອໜ້າ ຈະປຶກສາຫາລືກ່ຽວກັບການຄືນພະຊົນ ການສະເດັດສູ່ສະຫວັນ ແລະ ການປະທັບເທິງພະທີ່ນັ່ງຂອງພະເຢຊູ.*

| ໃຫ້ກັບໄປເປີດໜ້າປົກບົດທີ 4 ນີ້ ແລ້ວຂຽນຄວາມ "ຄືນພະຊົນ" "ສະເດັດສູ່ສະຫວັນ" ແລະ "ປະທັບເທິງພະທີ່ນັ່ງ" ໃຫ້ຖືກກັບຮູບ |
|---|

*ໃຫ້ເປີດເສັງ ບົດເສັງທີ 4!*

## ຄຳຕອບ:

**1** *ເປັນຂຶ້ນມາຈາກຕາຍ*

**2** *ກ. ອຸບໂມງຫວ່າງເປົ່າ ພະອົງປາກົດມາ ຫຼາຍຄົນປ່ຽນທ່າທີໃໝ່ ຂ. ການຄືນພະຊົນ*

**3** *ກ. ຜິດບາບ ຂ. ພະເຢຊູ*

**4** *ກ. ພະເຈົ້າ ຂ. ເຮົາ*

**5** *ກ. ພະເຈົ້າ ຂ. ພະເຈົ້າໄດ້ຮັບການບູຊາ*

**6** *ກ. ຄືນ ຂ. ຍົກພະເຢຊູຄືນ*

**7** *ກ. ລັກສະນະໃໝ່ ຂ. ລັກສະນະໃໝ່*

**8** *ກ ຂ ຖືກ*

**9** *ກ. ເພາະຍັງມີບາດແຜຢູ່ ຂ. ພະອົງກິນປາຕໍ່ໜ້າເຂົາ*

**10** *ກ. ອັດ ຂ. ຫາຍໄປ*

**11** *ລັກສະນະໃໝ່*

**12** *ກ. ພະອົງຍັງມີບາດແຜຢູ່ (ພະອົງກິນປາກໍໄດ້)*

*ຂ. ພະອົງຜ່ານປະຕູທີ່ປິດແລ້ວ (ພະອົງຫາຍຕົວໄປກໍໄດ້)*

**13** *ກ. ພະອົງ (ພະເຈົ້າ) ຂ. ເຮົາ*

**ຄຳຕອບ (ຕໍ່):**

**14** *ກ. ພະເຢຊູ ຂ. ເຮົາທັງຫຼາຍ*

**15** *ຄ ຖືກ*

**16** *ຮ່າງກາຍ... ລັກສະນະ*

**17** *ກ. ພະເຢຊູ ຂ. ຄົນທີ່ເປັນຝ່າຍພະຄຼິດໃນ ເວລາພະອົງສະເດັດມາ*

**18** *ກ. ຜົນແຮກ ຂ. ພະອົງ (ພະເຢຊູ)*

**19** *ຈະຄືນມາດ້ວຍ*

**20** *ກ. ການຄືນພະຊົນ ຂ. ການຄືນພະຊົນ*

*ຄ. ຮ່າງກາຍອັນເກົ່າທີ່ປ່ຽນລັກສະນະໃໝ່*

**21** *ການສະເດັດສູ່ສະຫວັນ*

**22** *ກ. ການຄືນພະຊົນ ຂ. ການສະເດັດສູ່ສະຫວັນ*

**23** *ກ. ຟ້າສະຫວັນ ຂ. ເມກ ສອງຄົນນຸ່ງເຄື່ອງຂາວ ຄ. ເມື່ອພະອົງສະເດັດມາອີກ*

**24** *ກ. ຍັງເທື່ອ ຂ. ພະເຢຊູຍັງບໍ່ໄດ້ຊົງຮັບສະຫງ່າລາສີ*

**25** *ກ. ພະວິນຍານ ຂ. ພະບິດາ (ຜູ້ຊົງໃຊ້ພະເຢຊູມາກໍໄດ້)*

*ຄ. ການສະເດັດສູ່ສະຫວັນ ງ. ພະວິນຍານ*

**26** *ກ. ທີ່ເຂົາກຳລັງເບິ່ງຢູ່ ຂ. ພະວິນຍານບໍລິສຸດ*

**27** *ກ. ວັນເພັນເຕຄໍສະເຕ ຂ. ພະວິນຍານບໍລິສຸດ ຄ. ພະວິຍານ*

**28** *ເຂົາໄດ້ຮັບພະວິນຍານ*

**29** *ກ. ບໍ່ໄດ້ ຂ. ໄດ້*

**30** *ບ່ອນສຳລັບເຮົາ*

**31** *ກ. ພະວິນຍານຂອງພະເຈົ້າ ຂ. ບ່ອນຢູ່ສຳລັບເຮົາ*

**32** *ກ. ທະນາຍຄວາມ ຂ. ພະເຢຊູ*

**33** *ອ້ອນວອນເພື່ອເຮົາ*

**34** *ອ້ອນວອນ*

**35** *ກ. ພວກເຮົາ ຂ. ພະເຈົ້າ*

**36** *ຄ ຖືກ*

**37** *ກ. ພະເຈົ້າ ຂ. ພະເຢຊູ (ພະອົງກໍໄດ້)*

**38** *ກ. ເທື່ອດຽວ ຂ. ບໍ່ (ຢູ່ເປັນນິດ)*

**39** *ພະເຢຊູ*

**40** *ກ. ຂໍພະກະລຸນາ*

*ຂ. ພະເຢຊູເປັນທະນາຍຄວາມເວົ້າຊ່ອຍເຮົາຕໍ່ພະບິດາ (ຄຳຄ້າຍຄືກັນກໍໄດ້)*

**41** *ຄ ງ ສ ຖືກ*

**ຄຳຕອບ (ຕໍ່):**

**42** *ກ. ຊົງໃຊ້ພະວິນຍານບໍລິສຸດມາ ຂ. ຊົງໄປຈັດແຈງບ່ອນໃນຟ້າສະຫວັນເພື່ອເຮົາ*
*ຄ. ຊົງເປັນທະນາຍຄວາມອ້ອນວອນເພື່ອເຮົາຕໍ່ພະບິດາ*

**43** *ກ. ພະທີ່ນັ່ງ ຂ. ກະສັດ ຄ. ພະທີ່ນັ່ງ ງ. ກະສັດ*

**44** *ກ. ສະຫວັນ ຂ. ພະທີ່ນັ່ງ*

**45** *ກ. ສູງກວ່າ ຂ. ເໜືອກວ່າ*

**46** *ກ. ພະທີ່ນັ່ງ ຂ. ພະບິດາເຈົ້າ*

**47** *ກ. ສິ່ງສາລະພັດທັງປວງ ຂ. ພະເຢຊູ*

**48** *ພະເຢຊູ*

**49** *ກ. ຊົງໃຫ້ພະວິນຍານບໍລິສຸດມາ ຂ. ຊົງໄປຈັດແຈງບ່ອນໃນຟ້າສະຫວັນເພື່ອເຮົາ*
*ຄ. ຊົງເປັນທະນາຍຄວາມອ້ອນວອນເພື່ອເຮົາຕໍ່ພະບິດາ*